# ບົດຮຽນໂຮງຮຽນວັນອາທິດ

**ວັນອາທິດ ທີ 13 ກັນຍາ 2009 (9-13-2009)**

---

## ຄົນທີ່ພຣະເຢຊູຊົງຮູ້ຈັກ

**ຂໍ້ພຣະຄັມພີໃນບົດຮຽນ:** ມາຣະໂກ 2:3-12,15-17,23-28

### ບົດຮຽນນີ້ສາມາດສະທ້ອນຕໍ່ຊີວິດຂອງທ່ານໄດ້ຢ່າງໃດ

ບົດຮຽນນີ້ຈະທ້າທາຍທ່ານໃຫ້ມີການສົນທະນາກັບຄົນອື່ນໆທີ່ມີຄຸນສົມບັດຄ້າຍຄືກັບພຣະຄຣິດ.

### ບົດຮຽນນີ້ເວົ້າກ່ຽວກັບຫຍັງ

ມາຣະໂກໄດ້ສະແດງໃຫ້ເຫັນເຖິງຊີວິດຂອງພຣະເຢຊູໄດ້ສຳຜັດແຕະຕ້ອງກັບຝູງຄົນຫຼາຍປະເພດ. ພຣະເຢຊູໄດ້ປິ່ນປົວຄົນເຈັບໃຫ້ຫາຍດີ, ໄດ້ຊອກຫາພວກຄົນບາບ, ແລະປະເຊີນໜ້າກັບພວກຖືສາສນາ.

### ເປັນຫຍັງບົດຮຽນນີ້ຈຶ່ງສຳຄັນ

ຫລາຍຄັ້ງພວກຄຣິສຕຽນມັກຫຼີກເວັ້ນຈາກການສົນທະນາກັບພວກຄົນທີ່ແຕກຕ່າງຈາກພວກເຂົາ. ມີພວກທີ່ບໍ່ເຊື່ອຫຼາຍທໍ່ໃດທີ່ພວກຄຣິສຕຽນຮູ້ຈັກ? ບົດຮຽນນີ້ສະແດງໃຫ້ເຫັນວ່າພຣະເຢຊູໄດ້ສົນທະນາກັບຝູງຄົນຊຶ່ງນຳຄວາມສົນໃຈດູດດຶງເອົາແມ້ກະທັ້ງພວກຜູ້ນຳທາງສາສນາທີ່ຕິຕຽນບໍ່ເຫັນພ້ອມກັບພຣະອົງ. ພຣະອົງໄດ້ສະແດງຄວາມສົງສານແລະໄດ້ແນະນຳຝູງຄົນໃຫ້ເຫັນເຖິງເປົ້າໝາຍອັນແທ້ຈິງຂອງພຣະອົງໃນຖານະເປັນພຣະບຸດຂອງພຣະເຈົ້າ.

ຕອນທີ່ໄດ້ໄປຢ້ຽມຢາມໂບດແຫ່ງນຶ່ງ, ຂ້າພະເຈົ້າຍັງຈຳໄດ້ບໍ່ລືມຄືຫາຊອກປະຕູທີ່ເປີດເຂົ້າໄປໃນໂບດບໍ່ໄດ້. ມີຍິງຄົນນຶ່ງໄດ້ບອກວ່າ,"ພວກເຮົາໃສ່ກອນປິດປະຕູໝົດທຸກອັນເຫຼືອອັນດຽວທີ່ມີຜູ້ເຝົ້າຍາມຢູ່. ພວກເຮົາຮູ້ວ່າແມ່ນຄົນປະເພດໃດທີ່ອາສັຍຢູ່ເຂດອ້ອມແອ້ມນີ້. ພວກເຮົາບໍ່ຢາກໃຫ້ໝົດທຸກຄົນເຂົ້າມາໃນທີ່ນີ້." ຂ້າພະເຈົ້າໄດ້ຖາມວ່າ. "ແຕ່ວ່າບໍ່ແມ່ນພວກຄົນເຫຼົ່ານີ້ຫຼືທີ່ພຣະເຢຊູມາເພື່ອເປັນພຣະຜູ້ຊ່ວຍໃຫ້ພົ້ນ?" ໃນຂນະທີ່ການປ້ອງກັນຮັກສາຄວາມສງົບເປັນບັນຫາ. ການແຍກຕົວອອກຂອງພວກຄຣິສຕຽນແມ່ນບໍ່ມີ. ມັນກໍເປັນສິ່ງທີ່ໜ້າງຶດງໍ້ບໍ່ແມ່ນຫຼືທີ່ພວກເຮົາສາມາດສ້າງເຄືອຂ່າຍກັບຄົນແປກໜ້າທົ່ວໂລກໄດ້, ແຕ່ວ່າພວກເຮົາອາດຈະບໍ່ຮູ້ຈັກກັບຄົນທີ່ຢູ່ຂ້າງບ້ານກັບພວກເຮົາ? ພຣະຄຣິດຕ້ອງການໃຫ້ພວກເຮົາມີສ່ວນກັບໂລກຂອງພວກເຮົາດ້ວຍຄວາມຮັກແລະຊີວິດຂອງພຣະອົງ.

## <u>ສຶກສາພຣະຄັມພີ</u>

1. **<u>ເປັນຜູ້ຮັບໃຊ້ຕໍ່ພວກທີ່ກຳລັງມີຄວາມເຈັບປວດ</u>** (ມາຣະໂກ 2:3-12)

ພຣະເຢຊູມີເວລາສຳລັບທຸກຄົນສເມີ. ຈະເປັນຄົນໜຸ່ມ, ຄົນເຖົ້າ, ຄົນເຈັບໄຂ, ຄົນແຂງແຮງດີ, ຄົນຍິວ, ຄົນຊາມາເຣັຽ-ຄົນທີ່ພຣະອົງຊົງຮັກ; ຄົນທີ່ພຣະອົງຊົງຍິນຍອມຕາຍແທນ. ຂນະທີ່ຢ້ຽມຢາມເມືອງກາເປນາອູມທາງຕາເວັນຕົກສ່ຽງເໜືອຂອງແຄມຝັ່ງທະເລຄາລີເລ, ພຣະເຢຊູກໍພົບພໍ້ກັບຝູງຄົນ. ລູກາໄດ້ບັນທຶກເພີ້ມວ່າມີພວກຟາຣີຊາຍ

ແລະພວກອາຈານສອນພຣະບັນຍັດຫຼາຍຄົນຢູ່ທີ່ນັ້ນດ້ວຍ. ຝູງຄົນໄດ້ພາກັນບຽດແໜ້ຈົນບໍ່ມີທີ່ຫວ່າງຢູ່ໃນເຮືອນບ່ອນທີ່ພຣະອົງປະທັບຢູ່.

**ຊາຍສີ່ຄົນ**ໄດ້ຫາມເພື່ອນທີ່ເປັນ**ເປ້ຍ**ມາ, ທີ່ບໍ່ສາມາດຍ່າງມາດ້ວຍຕົນເອງ. ພວກເຂົາຮູ້ຈັກວ່າພຣະເຢຊູສາມາດຊ່ວຍເພື່ອນຂອງພວກເຂົາໄດ້, ແຕ່ບໍ່ສາມາດທີ່ຈະໄປໃກ້ພຣະອົງໄດ້**ເພາະວ່າຝູງຄົນ**ໜາແໜ້ນ. ໂດຍບໍ່ມີຜູ້ຂັດຂວາງ, ພວກເຂົາກໍໄດ້ຫາມເພື່ອນນັ້ນຂຶ້ນເທິງຫຼັງຄາ, ບາງທີເຮືອນໃນສມັຍນັ້ນຄົງມີຂັ້ນໄດຂຶ້ນໄປ. ເມື່ອຫຼຽວຂຶ້ນເທິງ, ຝູງຄົນກໍໄດ້ເຫັນຫຼັງຄາເປີດເປັນປ່ອງຢູ່ເທິງຫົວຂອງພວກເຂົາ ແລະຊາຍທັງສີ່ຄົນກໍ**ຄ່ອຍຢ່ອນບ່ອນນອນຂອງຄົນເປ້ຍລົງ**ມາຕໍ່ໜ້າພຣະເຢຊູ.

ພຣະເຢຊູໄດ້ເຫັນ**ຄວາມເຊື່ອ**ແລະການກະທຳຂອງພວກເຂົາ. ເມື່ອເຫັນຄຳວ່າ*ຂອງພວກເຂົາ*ແນ່ນອນວ່າຕ້ອງແມ່ນເລັງໃສ່ຂອງພວກສີ່ຄົນນັ້ນ, ແລະກໍຄົງຈະລວມທັງຂອງຄົນເປ້ຍນັ້ນດ້ວຍ. ພຣະເຢຊູເລີ້ມກ່າວເຖິງຄວາມຕ້ອງການຝ່າຍຈິດວິນຍານກ່ອນ, ແທນທີ່ຈະແມ່ນຄວາມຕ້ອງກາຍຝ່າຍຮ່າງກາຍຂອງຊາຍເປ້ຍຄົນນັ້ນ. ການໃຊ້ຄຳວ່າ **ລູກເອີຍ**, ແມ່ນສະແດງໃຫ້ເຫັນຄວາມໜ້າຮັກ, ພຣະເຢຊູໄດ້ປະກາດອອກໄປວ່າບາບຂອງລາວຖືກອະພັຍໃຫ້ແລ້ວ. ພຣະເຢຊູໄດ້ຮູ້ຈັກວ່າຫົວໃຈຂອງມະນຸດ ແລະຄວາມຮູ້ສຶກຢາກຮັບການປິ່ນປົວຝ່າຍຈິດວິນຍານກໍເໝືອນກັນກັບຝ່າຍຮ່າງກາຍ. ພຣະເຢຊູກໍອາດຈະຕັ້ງຈຸດເລີ້ມຕົ້ນພິສູດໃຫ້ເຫັນຣິດອຳນາດຝ່າຍຈິດວິນຍານຂອງພຣະອົງໃນການຍົກໂທດບາບໄດ້.

**ພວກນັກທັມ**ທີ່ເປັນຄຣູສອນພຣະບັນຍັດທີ່ໄດ້ໃຊ້ເວລາໃນແຕ່ລະມື້ເພື່ອການກ່າຍແລະການສິດສອນບັນຍັດຂອງໂມເຊ. ພວກເຂົາຕັດສິນສິດທິຂອງພຣະເຢຊູໃນການຍົກໂທດຄວາມຜິດບາບ. ມາຣະໂກບັນທຶກວ່າດັ່ງນີ້ **ຄຶດໃນໃຈຂອງພວກເຂົາ** ຊຶ່ງຊີ້ໃຫ້ເຫັນວ່າພວກເຂົາບໍ່ໄດ້ເວົ້າດັງໆອອກມາ. ພວກເຂົາຄິດວ່າພຣະອົງ**ໝິ່ນປະມາດພຣະເຈົ້າ** ໂດຍການໄປແທນບ່ອນຂອງພຣະເຈົ້າໃນ**ການອະພັຍບາບໂທດ**. ພວກເຂົາບໍ່ເຂົ້າໃຈເສັຽວ່າພຣະເຢຊູກໍເປັນພຣະເຈົ້າອົງພຣະບຸດ.

ພຣະເຢຊູສາມາດເຂົ້າໃຈເຖິງຄວາມນຶກຄຶດໃນຫົວໃຈຂອງພວກນັກທັມເຫຼົ່ານັ້ນ. ພຣະອົງສວຍເອົາໂອກາດນັ້ນເປີດເຜີຍອຳນາດຂອງພຣະອົງໃນການຍົກໂທດບາບ, ຄືຍົກຕຳແໜ່ງຂອງພຣະອົງໃຫ້ເທົ່າທຽມກັບພຣະເຈົ້າ. ເຫດການທີ່ປາກົດເຫັນແກ່ຕາອັນນີ້ແມ່ນການຕອບສນອງຕໍ່ຄວາມຕ້ອງການຝ່າຍເນື້ອໜັງຂອງຊາຍເປ້ຍຄົນນັ້ນ ທີ່ຣິດເດດຂອງພຣະເຢຊູໄດ້ສະແດງໃຫ້ເຫັນອຳນາດທາງຝ່າຍຈິດວິນຍານດ້ວຍ.

ລອງວາດພາບເບິ່ງຄວາມອັສຈັນຂອງຊາຍເປ້ຍເມື່ອພຣະເຢຊູໄດ້ບອກລາວຈົ່ງລຸກຂຶ້ນຍົກເອົາບ່ອນນອນຂອງເຈົ້າໄປບ້ານເສັຽ! ລາວກໍປະຕິບັດຕາມທີ່ພຣະເຢຊູໄດ້ອອກຄຳສັ່ງຢ່າງທັນທີ. ເມື່ອຝູງຄົນເຫັນຊາຍເປ້ຍລຸກຂຶ້ນແລະຈາກໄປ, ພວກເຂົາກໍຕົກຕະລຶງແລະຮ້ອງສັຣເສີນພຣະເຈົ້າ, ແລະຍອມຮັບວ່າພວກເຂົາບໍ່ເຄີຍເຫັນແນວນີ້ຈັກເທື່ອ.

ຄວາມເຊື່ອໃນພຣະຄຣິດຂອງພວກເຮົາຕ້ອງໃຫ້ມັນເກີນກວ່າຄຳເວົ້າຊື່ໆ ຊຶ່ງຕ້ອງລວມທັງການກະທຳຂອງການຮັບໃຊ້ຕໍ່ພວກທີ່ມີຄວາມຕ້ອງການ. ເໝືອນດັ່ງທີ່ພຣະເຢຊູໄດ້ສຳຜັດແຕະຕ້ອງຊີວິດຂອງພວກເຮົາ, ພຣະອົງຕ້ອງການຊ່ວຍຄົນອື່ນໂດຍຜ່ານພວກເຮົາ.

## 2. <u>**ຊອກຫາຄົນບາບ**</u> (ມາຣະໂກ 2:15-17)

ພຣະເຢຊູບໍ່ໄດ້ລໍຖ້າໃຫ້ຄົນທີ່ຕ້ອງການໆຮັບໃຊ້ມາຫາພຣະອົງ. ພຣະອົງໄດ້ຊອກຫາພວກເຂົາ. ພຣະເຢຊູພົວພັນກັບພວກຄົນທີ່ພວກສາສນາກ່າວປະນາມແລະບໍ່ຕ້ອງການ. ຕົວຢ່າງອັນນຶ່ງແມ່ນເຣື່ອງຂອງ**ເລວີ**, ຫຼືອີກຊື່ນຶ່ງວ່າມັດທາຍ, ທີ່ເປັນຄົນເກັບພາສີ. ພວກຊາວຢິວຊັງພວກເກັບພາສີເພາະວ່າພວກເຂົາເປັນຄົນຢິວຖືກພວກໂຣມຮັບເອົາເປັນພະນັກ

ງານ. ສ່ວນຫຼາຍພວກເຂົາຈະເກັບຄ່າພາສີເກີນກຳນົດແລະສ່ວນທີ່ເຫຼືອກໍເອົາເຂົ້າຖົງຂອງພວກເຂົາ. ພຣະເຢຊູໄດ້ພົບເລວີກຳລັງເຮັດວຽກຢູ່ແລະໄດ້ເອີ້ນເອົາລາວໃຫ້ຕິດຕາມພຣະອົງ. ເລວີກໍປະໜ້າທີ່ຂອງລາວລຸກຂຶ້ນຕາມພຣະເຢຊູໄປທັນທີ.

ເລວີໄດ້ຈັດງານລ້ຽງສຳລັບພຣະເຢຊູແລະກໍໄດ້ເຊີນພຣະເຢຊູກັບພວກສາວົກຂອງພຣະອົງໃຫ້ພົບກັບພວກເພື່ອນຂອງລາວ. ພວກເພື່ອນຂອງຄົນເກັບພາສີກໍແມ່ນຄົນເກັບພາສີດ້ວຍກັນແລະພວກຄົນນອກສິນທັມ. ມາຣະໂກບອກວ່າ"ມີຫຼາຍຄົນຕິດຕາມພຣະອົງ," ບາງທີກໍອາດເລັງເຖິງພວກສາວົກຂອງພຣະເຢຊູ. ແຕ່ວ່າ, ຫຼັກວັຍຍະກອນຊີ້ບອກວ່າມາຣະໂກໝາຍເຖິງພວກເກັບພາສີແລະພວກນອກສິນທັມໄດ້ເລີ້ມຕິດຕາມພຣະເຢຊູ, ບາງທີກໍຍ້ອນຕົວຢ່າງຂອງເລວີທີ່ເປັນພຍານແກ່ພວກເຂົາ.

ຄາບເຂົ້າແລງທີ່ເກີດຂຶ້ນເບິ່ງເໝືອນວ່າຄົງຈັດຂຶ້ນທີ່ລະບຽງບ້ານຂອງເລວີ ເພາະວ່າພວກນັກທັມທີ່ພົວພັນກັບພວກຟາຣີຊາຍທີ່ຄອຍສັງເກດການໃນຄືນນັ້ນ. ພວກເຂົາຄົງຈະບໍ່ເຂົ້າໄປໃນເຮືອນຂອງເລວີ. ຈາກການສົນທະນາຂອງພວກນັກທັມກັບພວກສາວົກ, ພວກເຂົາປະນາມການທີ່ພຣະເຢຊູໄປຕິດພັນກັບພວກເກັບພາສີແລະພວກນອກສິນທັມ. ສຳລັບພວກເຂົາແລ້ວ, ບໍ່ມີອາຈານທີ່ໜ້ານັບຖືຄົນໃດອາດຈະໄປກິນເຂົ້າຮ່ວມກັບພວກທີ່ບໍ່ນັບຖືພຣະບັນຍັດແນວນີ້. ພວກນັກທັມມີຄວາມຊຳນານດ້ານບັນຍັດຂອງໂມເຊ, ແຕ່ວ່າບໍ່ຫົວຊາກັບຄວາມຮັກຂອງພຣະເຈົ້າ.

ພຣະເຢຊູຊີ້ບອກວ່າ ພຣະອົງຈະຮັບໃຊ້ພວກທີ່ມີຄວາມເຂົ້າໃຈຄວາມຕ້ອງການຂອງພວກເຂົາໃນພຣະອົງ. ພຣະອົງປຽບເທດການໃສ່ກັບທ່ານໝໍຊຶ່ງໂດຍທົ່ວໄປແລ້ວກໍປິ່ນປົວແຕ່ພວກຄົນເຈັບເທົ່ານັ້ນ. ພວກຊອບທັມສ່ວນຕົວເຫຼົ່ານີ້ບໍ່ໄດ້ເຂົ້າໃຈຄວາມຕ້ອງການອັນເລິກຝ່າຍຈິດວິນຍານຂອງພວກເຂົາເອງໃນຄວາມຕ້ອງການພຣະເຢຊູ. ພຣະເຢຊູໄດ້ມາຕາມຫາພວກຄົນຜິດບາບ, ບໍ່ແມ່ນພວກທີ່ຮ້ອງຕົວເອງວ່າເປັນພວກຊອບທັມແລະເຫັນວ່າບໍ່ຕ້ອງການໆໃຫ້ອະພັຍ. ຄືກັບພຣະເຢຊູ, ພວກທີ່ມີຄວາມເຊື່ອຄວນຈະສ້າງສາຍສຳພັນກັບພວກທີ່ບໍ່ເຊື່ອ, ແມ້ກະທັ້ງພວກທີ່ຮ້ອງຕົວເອງວ່າຍັງຕັດສິນໃຈບໍ່ໄດ້. ພວກທີ່ເຊື່ອຄວນຈະໄປຊອກຫາພວກເຫຼົ່ານີ້ແລະນຳມາພົບກັບພຣະເຢຊູ.

### 3. <u>**ປະເຊີນໜ້າກັບພວກຖືສາສນາ**</u> (ມາຣະໂກ 2:23-28)

ມາຣະໂກໄດ້ກ່າວເຖິງການທີ່ພຣະເຢຊູຕອບໂຕ້ກັບພວກຜູ້ນຳສາສນາເມື່ອພວກເຂົາຢາກໃຫ້ພຣະອົງເຂົ້າຮ່ວມລະບົບການສາສນາຂອງພວກເຂົາ. ໃນວັນຊະບາໂຕວັນນຶ່ງ, ພຣະເຢຊູແລະພວກສາວົກຂອງພຣະອົງໄດ້ເດີນທາງຜ່ານ**ທົ່ງນາ**ທີ່ອ້ອມຮອບເຂດຊົນນະບົດ. ຂນະທີ່ກຳລັງຍ່າງຜ່ານທົ່ງນາ, ມີສາວົກບາງຄົນໄດ້ເດັດເອົາ**ຮວງເຂົ້າ**ມາເກັດກິນ. ພວກ**ຟາຣີຊາຍ**ມີຄວາມເຊື່ອວ່າການປະພຶດແບບງ່າຍໆນີ້ເຊັ່ນປູກພືດຜົນແລະຝັດເຂົ້າ, ແມ່ນວຽກທີ່ຫ້າມບໍ່ໃຫ້ເຮັດໃນວັນຊະບາໂຕ. ພວກເຂົາກ່າວໂທດໃສ່ພວກສາວົກໃນການເຮັດ**ຜິດຕໍ່ກົດຣະບຽບ**(ອີງຕາມປະເພນີຂອງພວກເຂົາ, ບໍ່ແມ່ນອີງຕາມພຣະທັມຂອງພຣະເຈົ້າ).

ພວກຟາຣີຊາຍຢູ່ໂດຍຫຼັກຂອງສາສນາ. ພວກເຂົາຂາດສາຍສຳພັນສ່ວນຕົວກັບພຣະເຈົ້າ. ການຕັດສິນຄົນອື່ນໆຂອງພວກເຂົາເປີດໃຫ້ເຫັນຄວາມທຸກຈົນຝ່າຍຈິດວິນຍານຂອງພວກເຂົາ. ພວກຟາຣີຊາຍຢູ່ຕາມກົດລະບຽບຂອງສາສນາ; ພວກເຂົາຂາດສາຍສຳພັນສ່ວນຕົວກັບພຣະເຈົ້າ. ພຣະເຢຊູໄດ້ຕໍ່ວ່າພວກເຂົາດ້ວຍຂໍ້ພຣະຄັມພີ, ໂດຍເລັງເຖິງເຫດການເມື່ອ**ດາວິດ**ແລະ**ພັກພວກຂອງລາວ**ພາກັນ**ຫິວ**ເຂົ້າ, ໄດ້ເຂົ້າໄປໃນທີ່ສະຖິດຂອງພຣະເຈົ້າ, ແລະໄດ້ກິນ**ເຂົ້າຈີ່**ທີ່ຫວງຫ້າມບໍ່ໃຫ້ໃຜກິນເວັ້ນແຕ່ພວກປະໂຣຫິດເທົ່ານັ້ນ. ຈຸດທີ່ພຣະເຢຊູຊີ້ໃຫ້ເຫັນກໍຄືວ່າພຣະເຈົ້າສົນໃຈຕອບສນອງໃນຄວາມຕ້ອງການຂອງມະນຸດຫຼາຍກວ່າກົດຣະບຽບທາງສາສນາ. ພຣະເຢຊູໄດ້ເນັ້ນວ່າພຣະເຈົ້າເປັນຜູ້ສ້າງ**ວັນຊະບາໂຕ**ສຳລັບການພັກຜ່ອນແລະນະມັສການ. ອີກເທື່ອນຶ່ງພຣະອົງຊີ້ໃຫ້ເຫັນຄວາມເປັນພຣະເຈົ້າ, ພຣະເຢຊູໄດ້ປະກາດວ່າພຣະອົງເປັນ**ພຣະຜູ້ເປັນເຈົ້າແມ້ກະທັ້ງຂອງວັນຊະບາໂຕດ້ວຍ**.

ພວກຄຣິສຕຽນຕ້ອງຫຼີກເວັ້ນທຸກຮູບແບບຂອງກົດຕັ້ງຂຶ້ນຂອງມະນຸດແລະຄວນຈະຍອມຢູ່ໃຕ້ຄວາມເປັນພຣະເຈົ້າຂອງພຣະເຢຊູໃນທຸກໆດ້ານຂອງຊີວິດພວກເຂົາ. ພວກທີ່ເຊື່ອມີໜ້າທີ່ຮັບຜິດຊອບທີ່ຈະນຳພຣະກຽດມາສູ່ພຣະເຈົ້າແລະນຳປໂຍດໃຫ້ແກ່ຄົນອື່ນໆໃນວັນຂອງອົງພຣະຜູ້ເປັນເຈົ້າ.

## ບົດຮຽນຊີວິດ

ພຣະເຢຊູໄດ້ໃຫ້ຄວາມສົນໃຈເຮັດໃຫ້ຄວາມຕ້ອງການຂອງມະນຸດໄດ້ຮັບການແກ້ໄຂ, ທັງຝ່າຍຈິດວິນຍານແລະຝ່າຍເນື້ອກາຍ, ຫຼາຍກ່ວາການຍອມຮັບເຂົ້າກຸ່ມຈັດຕັ້ງຂອງສາສນາ. ພຣະອົງຕ້ອງການທີ່ຈະໃຫ້ພວກສາວົກແລະພວກຟາຣີຊາຍເຂົ້າໃຈວ່າພວກເຂົາຄວນຈະແບ່ງປັນຂ່າວເຣື່ອງຂອງພຣະອົງໂດຍຮັບໃຊ້ຄົນທຸກໆປະເພດ. ພຣະອົງໄດ້ຍົກໂທດບາບແລະປິ່ນປົວຊີວິດໃຫ້ຫາຍດີ. ເປົ້າໝາຍກໍຄືບໍ່ໃຫ້ເປັນຂ່າວປະເສີດຕາມສັງຄົມຊື່ໆ, ແຕ່ໃຫ້ເປັນຂ່າວປະເສີດທີ່ເຕັມບໍຣິບູນຢ່າງແທ້ຈິງ.

ໃຫ້ຄິດເຖິງຄົນທີ່ຢູ່ໃນວົງລ້ອມຂອງທ່ານ. ມີໃຜທີ່ທ່ານເຫັນວ່າຄົງຈະເປັນເໝືອນຊາຍເປັ້ຽຄົນນັ້ນ, ທີ່ຕ້ອງການການຮັບໃຊ້ຝ່າຍເນື້ອກາຍ. ທ່ານຈະສາມາດຊ່ວຍຕອບສນອງຕໍ່ຄວາມຕ້ອງການຂອງຄົນນັ້ນໄດ້ຢ່າງໃດ? ທ່ານຈະສາມາດຮັບໃຊ້ຝ່າຍເນື້ອກາຍໃນທາງທີ່ຈະຊ່ວຍທາງຝ່າຍຈິດວິນຍານໄດ້ເຊັ່ນກັນ?

ມີໃຜແດ່ທີ່ທ່ານໄດ້ຮູ້ຈັກທີ່ຄ້າຍຄືກັບມັດທາຍ-ບໍ່ຈຳເປັນວ່າຈະຕ້ອງເປັນພະນັກງານເກັບພາສີ, ແຕ່-ແມ່ນບາງຄົນທີ່ຖືກສັງຄົມປະຖິ້ມ? ພວກຄົນອື່ນຈະວ່າຢ່າງໃດເມື່ອພວກເຂົາເຫັນທ່ານພົວພັນກັບຄົນນັ້ນ? ທ່ານເຕັມໃຈທີ່ຈະສ່ຽງຮັບຜິນໃນການທີ່ຈະສະແດງອອກເຖິງຄວາມຮັກຂອງພຣະຄຣິດ.

ທ່ານເຄີຍໄດ້ສັງເກດທວນຄືນເບິ່ງການປະຕິບັດໃນເບື້ອງຫຼັງທີ່ທ່ວງດຶງບໍ່ໃຫ້ຮັບໃຊ້ຄົນທຸກໆປະເພດບໍ່? ທ່ານສາມາດຄິດເຫັນການປະພຶດອັນເຄີຍຊິນອັນໃດທີ່ຂັດຂວາງຕໍ່ການຮັບໃຊ້ຂອງທ່ານຕໍ່ຄົນທີ່ເຈັບປວດ? ທ່ານສາມາດນຳເອົາຂ່າວປະເສີດໄປແບ່ງປັນໄດ້ກ້ວາງໄກສ່ຳໃດ?

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປໂດຍ PA